# ສັນຍາວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ

# Agreement on Import Licensing Procedures

## ສະພາບລວມ

ອົງການການຄ້າໂລກ (ອຄລ) ມີຈຸດປະສົງເພື່ອສົ່ງເສີມ ແລະ ເອື້ອອຳນວຍຄວາມສະດວກແກ່ການຄ້າລະຫວ່າງປະເທດໃຫ້ມີການຂະຫຍາຍຕົວ ແລະ ປະກອບສ່ວນໃນການພັດທະນາເສດຖະກິດແຫ່ງຊາດ ແລະ ລົບລ້າງຄວາມທຸກຍາກຂອງປະຊາຊົນ. ເພື່ອຮັບປະກັນໃຫ້ຂັ້ນຕອນ ແລະ ເງື່ອນໄຂໃນການອະນຸຍາດການນຳເຂົ້າມີຄວາມກະທັດຮັດ, ໂປ່ງໃສ, ເປັນທຳ ແລະ ທ່ຽງທຳ, ສັນຍາວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ (Agreement on Import Licensing Procedures: ILP) ຈຶ່ງໄດ້ຖືກຮັບຮອງ ແລະ ເປັນໜຶ່ງໃນສັນຍາລູກທີ່ສຳຄັນພາຍໃຕ້ສັນຍາລວມວ່າດ້ວຍອັດຕາພາສີ ແລະ ການຄ້າ (General Agreement on Tariffs and Trade: GATT).

ສັນຍາ ILP ກຳນົດວ່າ ຂັ້ນຕອນການອອກໃບອະນຸຍາດນຳເຂົ້າ ໝາຍເຖິງ ຂັ້ນຕອນທາງດ້ານບໍລິຫານ ທີ່ນອກເໜືອຈາກການແຈ້ງເສຍພາສີ ຊຶ່ງຮຽກຮ້ອງໃຫ້ຜູ້ຂໍອະນຸຍາດນຳເຂົ້າສິນຄ້າ ຕ້ອງຍື່ນຄຳຮ້ອງພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ ຕໍ່ອົງການອອກໃບອະນຸຍາດນຳເຂົ້າ ກ່ອນນຳສິນຄ້າເຂົ້າມາໃນເຂດແດນພາສີ ຂອງປະເທດໃດໜຶ່ງ.

## ປະເພດຂອງການອອກໃບອະນຸຍາດນຳເຂົ້າ

ສັນຍານີ້ແບ່ງການອອກໃບອະນຸຍາດນຳເຂົ້າເປັນ 2 ປະເພດຄື: ແບບອັດຕະໂນມັດ ແລະ ແບບບໍ່ອັດຕະໂນມັດ.

**1. ການອອກໃບອະນຸຍາດນຳເຂົ້າແບບອັດຕະໂນມັດ**

ເຈົ້າໜ້າທີ່ທີ່ອອກໃບອະນຸຍາດນຳເຂົ້າ ແບບອັດຕະໂນມັດ ຈະຕ້ອງອອກໃບອະນຸຍາດນຳເຂົ້າ ໂດຍທັນທີ ຫລື ຢ່າງຊ້າບໍ່ໃຫ້ເກີນ 10 ວັນລັດຖະການ ໃຫ້ແກ່ຜູ້ນຳເຂົ້າທີ່ໄດ້ຍື່ນເອກະສານຢ່າງຄົບຖ້ວນ ແລະ ຖືກຕ້ອງ.

**2. ການອອກໃບອະນຸຍາດນຳເຂົ້າແບບບໍ່ອັດຕະໂນມັດ**

ການອອກໃບອະນຸຍາດນຳເຂົ້າປະເພດນີ້ ໂດຍທົ່ວໄປແມ່ນ ນຳໃຊ້ເມື່ອມີການຈຳກັດປະລິມານການນຳເຂົ້າ ຫຼື ໂຄຕາ. ຖ້າປະຕິບັດຕາມຫລັກການຜູ້ໃດມາຍື່ນກ່ອນຈະໄດ້ຮັບພິຈາລະນາກ່ອນ, ກຳນົດເວລາສຳລັບການພິຈາລະນາອອກໃບອະນຸຍາດນຳເຂົ້າ ແມ່ນບໍ່ໃຫ້ເກີນ 30 ວັນ ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງຢ່າງຄົບຖ້ວນ ແລະ ຖືກຕ້ອງ.

ໃນກໍລະນີເຈົ້າໜ້າທີ່ອອກໃບອະນຸຍາດນຳເຂົ້າພິຈາລະນາເອກະສານທີ່ກ່ຽວຂ້ອງທັງໝົດພ້ອມກັນໃນໄລຍະເວລາດຽວກຳນົດເວລາໃນການພິຈາລະນາອອກໃບອະນຸຍາດແມ່ນບໍ່ໃຫ້ເກີນ 60 ວັນ ນັບແຕ່ວັນປະກາດປິດຮັບເອກະສານເປັນຕົ້ນໄປ.

## ພັນທະພື້ນຖານຂອງສັນຍາ

ສັນຍານີ້ກຳນົດໃຫ້ປະເທດສະມາຊິກ ຕ້ອງຈັດພິມທຸກຂໍ້ມູນຂ່າວສານ ກ່ຽວກັບຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າເພື່ອເຮັດໃຫ້ຜູ້ນຳເຂົ້າ, ຜູ້ສົ່ງອອກ ແລະ ປະເທດສະມາຊິກອື່ນ ຮັບຊາບຢ່າງທົ່ວເຖິງກ່ຽວກັບ:

- ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ມີສິດຍື່ນຄຳຮ້ອງຂໍໃບອະນຸຍາດນຳເຂົ້າສິນຄ້າ;
- ອົງການບໍລິຫານຂອງລັດທີ່ມີສິດອອກໃບອະນຸຍາດນຳເຂົ້າຕາມລະບຽບກົດໝາຍ; ແລະ
- ບັນຊີລາຍການສິນຄ້າທີ່ຕ້ອງຂໍອະນຸຍາດນຳເຂົ້າ.

ເພື່ອປົກປ້ອງສິດຜົນປະໂຫຍດຂອງຜູ້ນຳເຂົ້າ ແລະ ອຳນວຍຄວາມສະດວກໃນການອອກໃບອະນຸຍາດນຳເຂົ້າໃຫ້ ໄວຂຶ້ນ, ສັນຍານີ້ໄດ້ກຳນົດເງື່ອນໄຂ ດັ່ງນີ້:

- ທຸກໆ ແບບຟອມ ແລະ ຂັ້ນຕອນການຍື່ນຄຳຮ້ອງ ລວມທັງ ຂັ້ນຕອນການຕໍ່ອາຍຸໃບອະນຸຍາດນຳເຂົ້າ ຕ້ອງກະທັດຮັດ ແລະ ງ່າຍດາຍ;
- ທຸກໆ ຄຳຮ້ອງຈະບໍ່ຖືກປະຕິເສດ ຍ້ອນຄວາມຜິດພາດພຽງໃນເອກະສານ ຊຶ່ງບໍ່ໄດ້ປ່ຽນແປງຂໍ້ມູນພື້ນຖານທີ່ສະແດງຢູ່ໃນເອກະ ສານນັ້ນ.
- ສິນຄ້າທີ່ໄດ້ຮັບການອະນຸຍາດນຳເຂົ້າແລ້ວ ຈະບໍ່ຖືກປະຕິເສດໃຫ້ນຳເຂົ້າ ຍ້ອນມູນຄ່າ, ປະລິມານ ຫລື ນ້ຳໜັກແຕກຕ່າງພຽງເລັກນ້ອຍ (ໂດຍສອດຄ່ອງກັບການປະຕິບັດແບບປົກກະຕິທາງການຄ້າ) ຈາກຈຳນວນທີ່ໄດ້ລະບຸໄວ້ໃນໃບອະນຸຍາດນຳເຂົ້າ.

### ຄວາມໝາຍສໍາຄັນຕໍ່ທຸລະກິດ

ສັນຍາ ILP ກໍານົດຫລັກການ ແລະ ຂັ້ນຕອນເພື່ອເຮັດໃຫ້ການອອກໃບອະນຸຍາດນໍາເຂົ້າສິນຄ້າ ມີຄວາມກະທັດຮັດ, ໂປ່ງໃສ, ເປັນທໍາ ແລະ ທ່ຽງທໍາ ຊຶ່ງຈະຊ່ວຍຫລຸດຜ່ອນຄ່າໃຊ້ຈ່າຍໃຫ້ແກ່ຜູ້ດໍາເນີນທຸລະກິດ. ສັນຍານີ້ຍັງຮັບປະກັນວ່າ ການຍື່ນຂໍໃບອະນຸຍາດນໍາເຂົ້າ ຈະໄດ້ຮັບການອະນຸມັດພາຍໃນກໍານົດເວລາໃດໜຶ່ງທີ່ຈະແຈ້ງ ແລະ ຜູ້ນໍາເຂົ້າຈະບໍ່ຖືກປະຕິເສດການນໍາເຂົ້າ ຍ້ອນຄວາມຜິດພາດດ້ານເອກະສານພຽງເລັກນ້ອຍ.

ອຄລ ຍັງອະນຸຍາດໃຫ້ປະເທດສະມາຊິກຄຸ້ມຄອງການນໍາເຂົ້າ ເພື່ອຮັບປະກັນຄວາມປອດໄພຕໍ່ຊີວິດ ແລະ ສຸຂະພາບ ຂອງຄົນ, ສັດ ແລະ ພືດ ພາຍໃຕ້ສັນຍາວ່າດ້ວຍມາດຕະການສຸຂານາໄມ ແລະ ອະນາໄມພືດ (SPS) ແລະ ສັນຍາວ່າດ້ວຍເຕັກນິກສິ່ງກີດຂວາງດ້ານການຄ້າ (TBT) ຊຶ່ງແຕກຕ່າງຈາກມາດຕະການພາຍໃຕ້ສັນຍາ ILP.

### ໂຄງຮ່າງຂອງສັນຍາວ່າດ້ວຍ ຂັ້ນຕອນການອອກໃບອະນຸຍາດນໍາເຂົ້າສິນຄ້າ

| | |
|---|---|
| ບົດນໍາ | |
| ມາດຕາ I<br>ມາດຕາ II | ບົດບັນຍັດທົ່ວໄປ<br>ການອອກໃບອະນຸຍາດແບບອັດຕະໂນມັດ |
| ມາດຕາ III<br>ມາດຕາ IV<br>ມາດຕາ V<br>ມາດຕາ VI<br>ມາດຕາ VII<br>ມາດຕາ VIII | ການອອກໃບອະນຸຍາດແບບບໍ່ອັດຕະໂນມັດ<br>ສະຖາບັນ<br>ການແຈ້ງການ<br>ການປຶກສາຫາລື ແລະ ການໄກ່ເກ່ຍ<br>ການທົບທວນຄືນ<br>ບົດບັນຍັດສຸດທ້າຍ |

## ນິຕິກໍາຄຸ້ມຄອງການນໍາເຂົ້າຂອງ ສປປ ລາວ

ໃນເມື່ອກ່ອນ ສປປ ລາວ ເຄີຍນໍາໃຊ້ຫລາຍມາດຕະການໃນການຄຸ້ມຄອງການນໍາເຂົ້າ-ສົ່ງອອກ ເປັນຕົ້ນແມ່ນດໍາລັດວ່າດ້ວຍ ການຄຸ້ມຄອງການນໍາເຂົ້າ-ສົ່ງອອກ ສະບັບເລກທີ 205/ນຍ, ລົງວັນທີ 11/10/2001 ແລະ ແຈ້ງການສະບັບເລກທີ 1376/ກຄອ.ກຂອ, ລົງວັນທີ 10/10/2006 ເພື່ອຈຸດປະສົງຄຸ້ມຄອງການນໍາເຂົ້າ ແລະ ປົກປ້ອງການຜະລິດພາຍໃນ. ເຖິງຢ່າງໃດ ກໍຕາມ, ມາດຕະການດັ່ງກ່າວ ບໍ່ພຽງແຕ່ຈະສ້າງອຸປະສັກໃຫ້ແກ່ການຄ້າລະຫວ່າງປະເທດ ແລະ ມີຂັ້ນຕອນທີ່ສະຫລັບຊັບຊ້ອນຊຶ່ງຈະເປັນການສ້າງຄວາມຊັກຊ້າໃນການອະນຸຍາດນໍາເຂົ້າເທົ່ານັ້ນແຕ່ຍັງເປັນການບໍ່ເອື້ອອໍານວຍຄວາມສະດວກໃຫ້ການເຄື່ອນໄຫວຂອງພາກທຸລະກິດອີກດ້ວຍ.

ເພື່ອສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ແກ່ວຽກງານການເຊື່ອມໂຍງເສດຖະກິດກັບສາກົນ ໂດຍສະເພາະການເຂົ້າເປັນສະມາຊິກ ອຄລ, ລັດຖະບານໄດ້ອອກດໍາລັດວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນໍາເຂົ້າສິນຄ້າ ສະບັບເລກທີ 186/ນຍ ລົງວັນທີ 7/7/2009 ການສອດຄ່ອງກັບ ສັນຍາ ILP ຂອງ ອຄຕ. ພ້ອມນີ້, ກະຊວງກໍາລັງຮ່າງຂໍ້ຕົກລົງຈັດຕັ້ງປະຕິບັດດໍາລັດດັ່ງກ່າວມີການປັບປຸງ ແຈ້ງການລາຍການສິນຄ້າຄຸ້ມຄອງການນໍາເຂົ້າ ແລະ ສົ່ງອອກ ເພື່ອປ່ຽນແທນແຈ້ງການ ສະບັບເລກທີ 1376/ກຄອ.ກຂອ ພ້ອມທັງກໍາລັງປັບປຸງດໍາລັດສະບັບເລກທີ 205/ນຍ ໃນການຄຸ້ມຄອງລະບອບການນໍາເຂົ້າ-ສົ່ງອອກ

**ສົນໃຈຂໍ້ມູນຕື່ມ:**

ກົມນະໂຍບາຍການຄ້າຕ່າງປະເທດ, ໂທ/ແຟັກສ: 021 450066
ກົມການນໍາເຂົ້າ ແລະ ສົ່ງອອກ, ໂທ: 021 412008; ແຟັກສ: 021 413901/412010

**ສະໜັບສະໜູນໂດຍ:**

ໂຄງການສະໜັບສະໜູນ ສປປ ລາວ ເຂົ້າເປັນສະມາຊິກອົງການການຄ້າໂລກ (WTO),
ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP)